# ດອກໄມ້ ກັບ ສາຍລົມ

ໂດຍ ຣະຕະພອນ ສຸກສະວັນ

C'est un roman lao écrit par Rattaphone Souksavane.Elle raconte l'histoire d'amour d'une jeune fille innocente et un jeune homme à Houei Sai au Laos.

" ຂໍຂອບໃຈຢ່າງຍິ່ງມາຍັງ ອ້າຍປັ້ງ ແລະ ເອື້ອຍປີ້ງ ທີ່ຝາກ ນິຍາຍໃຫມ່ ເຣື່ອງນີ້ມາຣ່ວມສາລາໄຍແມງມຸມຂອງ ພວກຂ້ອຍ ຫວັງຢ່າງຍິ່ງ ຄົງຈະໄດ້ຮັບ ເຣື່ອງໃຫມ່ຕໍ່ໄປເລື້ອຍ ໆ. ສຸກສັນວັນເກີດ ໕໐ ປີ ແກ່ອ້າຍປັ້ງ. ຫມັ້ນຍືນ ໆ ໆ"

ເມືອງບໍ່ແກ້ວຫວ້ຍຊາຍ ມີຖນົນໃຫ່ຍ ອ້ອມຈຸຕີນພູພຽງໆເສັ້ນດຽວ, ແລະ ເສັ້ນນີ້ເອງ ທີ່ມີເຮືອນ ຂອງດອກໄມ້ ກັບ ສາຍລົມອາສັຍຢູ່ໃກ້ ໆ ກັນຄື: ບ້ານຂອງຄົນທັງສອງ ຢູ່ຕິດແຄມ ຄົນລະຝາກທາງຊຶ່ງ ກັນ ເຫັນກັນດີ ແລະ ຖະນັດ...

- ດອກໄມ້...ພັທນາຢູ່ບໍ່ ? ສຽງຂອງສາຍລົມ ຫນຸ່ມນ້ອຍ ວັຍ ໑໕ ປີດັງພົ້ນຫົວຂົ້ນໄດມາ.

-ແມ່ຫາໄປຕລາດ ບຶດນຶ່ງກໍ່ຄົງຈະກັບມາ... ດອກໄມ້ສາວນ້ອຍພຽງ ໑໐ປີຮ້ອງບອກ ທັງດີໃຈ ທີ່ໄດ້ເຫັນຫນ້າ ສາຍລົມ, ສາຍລົມ ເປັນເພື່ອນສນິດຂອງ ພັທນາຜູ້ເປັນອ້າຍ.

-ອ້າຍສາຍລົມຊິໄປໃສ... ດອກໄມ້ໄປນໍາ ? ສາວນ້ອຍເຫັນສາຍລົມ ວາງກະສອບນ້ອຍ ພາດພະນັກ ຣະບຽງ ຂ້າງຂັ້ນໄດ ແລ້ວສາຍລົມ ກໍ່ຖົ້ມຕົວນັ່ງຢູ່ ພຽງຫົວຂັ້ນໄດນັ້ນ.

-ອ້າຍມີນັດ ກັບພັທ ວ່າຈະພາກັນ ໄປເກັບຫມາກທັນ ຢູ່ສວນຫົວເມືອງ...ສາຍລົມບອກສຽງອ່ອນຫວານ ຕາມນິສັຍປະຈໍາຕົວ... ດອກໄມ້ຮັກສາຍລົມ ຫລາຍກວ່າຮັກພັທນາ ຊຶ່ງເປັນອ້າຍຂອງຕົນເສັຍອີກ... ພັທນາເປັນອ້າຍທີ່ມັກ ຄອຍຕົບຕີດອກໄມ້ສເມີ... ແລ້ວສາຍລົມ ກໍ່ເປັນຜູ້ອອຍຢູ່ເລື້ອຍ ໆ ມາ.

-ໃຫ້ດອກໄມ້ໄປນຳ... ເນີ້ !!! ອ້າຍສາຍລົມ ໃຫ້ດອກໄມ້ໄປນຳ... " ດອກໄມ້ອ້ອນວອນ ທັງກໍ່ຍ່າງໆລົງມານັ່ງ ຢູ່ຂັ້ນໄດ ລຸດຕ່ຳລົງໄປກວ່າຂັ້ນນຶ່ງ.

-ອ້າຍບໍ່ເຄີຍປະຕິເສດດອກໄມ້ຈັກເທື່ອ... ໄປກໍ່ໄປ " ສາຍລົມ ບອກດອກໄມ້ດີໃຈໃຫຍ່, ຮີບຟ້າວແລ່ນ ເຂົ້າໄປໃນເຮືອນ ຕຽມຄົວ ໄປຊອກຖົງເຊັ່ນກັນໄວ້ ບັນຈຸໜາກທັນ ຕາມທີ່ສາຍລົມບອກ.

-ເຮົາໄປແວ່ຫາໂຕຢູ່ບ້ານ ວ່າງກີ້ " ມີສຽງດັງ ມາຈາກຕີນຂັ້ນໄດ ເປັນສຽງຂອງພັທນານັ້ນເອງ, ດອກໄມ້ຖືຖົງອອກມາ.

-ມຶງຊິໄປໃສອີ່ດອກໄມ້ ? ພັທນາຮ້ອງຖາມໃສ່ທັນທີ, ທີ່ເຫັນນ້ອງສາວ ຕຽມທ່າລົງເຮືອນນຳ.

-ໄປເກັບໝາກທັນ !

-ໃຜບອກມຶງໄປ ! ພັທນາສຽງດັງກວ່າເກົ່າ.

-ເຮົານີ້ແຫລະບອກ " ສາຍລົມລັດຄວາມ.

-ບໍ່ໄປ !.. ມຶງໄປຫຍຸ້ງລ້າ ! ເອົ້ານີ້ຜັກຫອມ ກັບ ຫໍ່ໝາກເຜັດ... ເອົາໄປໃຫ້ແມ່ " ພັທບໍ່ຍອມ ຂຶ້ນມາເຮືອນ, ໂຍນຜັກ ກັບ ຮໍ່ໝາກເຜັດ ຂ້າມພົ້ນຫົວຂັ້ນໄດມາ.

-ອ້າຍສາຍລົມໃຫ້ເຂົາໄປ... ບໍ່ໄດ້ກຸ່ ວກັບເພິ່ນນະ... ເຂົາບໍ່ໄປຫຍຸ້ງດ໊ອກ... ຫາກວ່າໄປເກັບໝາກທັນ... ເຂົາກໍ່ຈະໄປເກັບຊ່ອຍ." ດອກໄມ້ບອກສຽງອອຍ ໆ ມອງໄປທາງສາຍລົມອີກ... ເຫັນສາຍລົມ ພະຍັກໜ້າ ໃຫ້ເປັນເຊີງເຫັນພ້ອມ... ດອກໄມ້ຟ້າວກົ້ມ ເກັບເຄື່ອງຫອມນັ້ນ ເຂົ້າໄປ ວາງໄ ວ້ໃນເຮືອນຄົວ.

-ຫວ໋າ ! ໂຕຍັງບໍ່ຫລາບ ຫວະສາຍລົມ ! ດຽວຊິໄດ້ເຈັ່ງມັນ ກັບບ້ານອີກ ! ພັທຫັນໄປ ວ່າກັບເພື່ອນ... ດອກໄມ້ ເຄີຍນຳກົ້ນ ໄປຊອກເກັບເມັດແກ້ວ ຢູ່ໃນຫວ້ຍ ທີ່ຫົວເມືອງ ໂດນເຂົ້າໄປຢຽບກ້ອງແກ້ວແຕກ... ພັທໂອຍວາຍ ຕີນ້ອງສາວອີກ ທີ່ດື້ມານຳ, ທັງທຸບຫລັງ ດຶງຜົມ.

-ກູ ວ່າແລ້ວ ! ແລ່ນມານຳເຮັດຫຍັງ !.. ດອກໄມ້ຮ້ອງໄຫ້ ເລືອດໄຫລຈາກຕີນ ບໍ່ປຸດປອ່ນ... ພັທກໍ່ບໍ່ຍອມ ເຈັ່ງນ້ອງ... ແມ່ນສາຍລົມເອງ ທີ່ເຈັ່ງດອກໄມ້ກັບຄືນບ້ານ ທັງຈອບທັງອອຍ... ເພາະແກ້ວນັ້ນ ປັກສຽບຄາຕີນ ຈົນເລີກດອກໄມ້ຍ່າງບໍ່ໄດ້.

-ເອົ້າ ! ເຈັ່ງກໍ່ເຈັ່ງ... ນ້ອງສາ ວຄົນດຽວແທ້ ໆ ບໍ່ຫນ້າຈະຂັດຂືນ... ດອກໄມ້ ຫນ້າຮັກອອກຈັ່ງຊີ້... ໂຕກໍ່ບໍ່ຫນ້າຈະຮ້າຍນ້ອງໆເລີຍ ໆ... ຮ້າຍບໍ່ວ່າ ດື້ອກ... ຢ່າສູ່ທຸບສູ່ຕີ... " ສາຍລົມ ພອ້ມດອກໄມ້ສເມີ ພາງກໍ່ຈູງມືດອກໄມ້ລົງ ຂັ້ນໄດມາ... ພັທຍັງເຮັດຕາຂຽວ, ເບິ່ງນ້ອງ ນັຍຕາຂວາງ ໆ ອີກ, ດອກໄມ້ແອບຍິ້ມ ຢູ່ຂ້າງ ໆ ສ າຍລົມ.

-ອ້າຍຂອງເຂົາບໍ່ແມ່ນເພິ່ນ... ຜູ່ນີ້ພີ້ແມ່ນອ້າຍຂອງໆເຂົາ. " ດອກໄມ້ລໍ້ສຽງດີໃຈ ໃສ່ພັທນາ... ທັງຈີ້ນີ້ວມືໃສ່ຕົວຂອງສາຍລົມ ວ່າເປັນອ້າຍ... ທັງສາມຍ່າງ ຈົນໄປຮອດ ສຸດທາງເມືອງ... ເລີ້ມຈາກນັ້ນ ກໍ່ຈະເປັນທາງນ້ອຍ ທີ່ມີສອງຟາກຂ້າງເປັນສວນ... ມີຮົ້ວອ້ອມ ຂັ້ນເຂດ ຂອງໃຜລາວ...

ພັທຮູ້ບ່ອນເກັບຫມາກທັນ ບໍ່ໄດ້ສົນ ວ່າຈະເປັນ ກັມມະສິດຂອງໆໃຜ.... ຮອດຍາມມັນເປັນຫມາກມາ ກໍ່ລັກລອບ ເຂົ້າໄປເກັບ ຫມາກທັນທີ່ລົ່ນເຮັ່ຽຣີກເຕັມພື້ນ ເກັບຈົນບໍ່ໄຫວ, ແຕ່ຕ້ອງຍ່າງ ເຂົ້າໄປໄກ ແລະ ເລິກ ໆ ໄກຈາກຫມູ່ບ້ານ, ແຖບແຖວນີ້ ລ້ວນແລ້ວ ແຕ່ເປັນສວນຫມາກມ່ວງ ຫມາກມີ້ ຫລື ກໍ່ສວນກ້ວຍ ປູກຣີກ ເຕັມໃນສວນໃຜ ສວນລາວ... ແລະກໍ່ຕໍ່ແຮງລັກໄດ້ລັກເອົາ ອີກນັ້ນແຫລະ ສຳຣັບພັທນາ.

ຄັ້ງນີ້ ກໍ່ຄືກັນ ເກັບເອົາຈົນເຕັມຖົງ ຂອງໆສາຍລົມທີ່ຖືມາ ແລະ ຂອງໆດອກໄມ້ອີກ... ແຕ່ດອກໄມ້ ກໍ່ຍັງຄິດຢາກ ຈະໄດ້ຫມາກທັນ ອັນມັນຫ້ອຍ ໂຕ່ນເຕ່ນ ຢູ່ເທິງງ່າ ຫລາຍກວ່າຢູ່ພື້ນ... ດ້ວຍໃຈຄະນອງ ຊຶ່ງໄປລັກປີນຂຶ້ນ ຕົ້ນຫມາກທັນງຽບ ໆ ອີກກົກ ທີ່ຢູ່ໄກຫ່າງຕາຂອງໆພັທຜູ້ເປັນອ້າຍ.

-ນອ້ງໆໂຕໄປໃສຣະ... ດອກໄມ້ໄປໃສ ? ສາຍລົມແລຊ້າຍ ແລຂວາ ເປັນຫ່ວງ ດອກໄມ້ ນ້ອງສາວຂອງເພື່ອນຫລາຍກ່ວາ ພັທຜູ້ເປັນອ້າຍ ເສັ່ງອີກ.

-ເອີ້... ໄປໃສກະຢ່າ... ຢ່າໃຫ້ມີເຣື້ອງ ມາສູ່ພວກເຮົາກະແລ້ວກັນນ່າ... " ພັທກັບຕອບແບບນັ້ນ, ນັ່ງແພະຢູ່ກັບພື້ນ ເກັບຫມາກທັນ ມາໂຮມໄ ວ້ກຳມື ປ່ອນໃສ່ສົບຍ້ຳກິນຢ່າງໆແຊບນົວ... ຫມາກທັນ ສນິດນີ້

ເປັນໜາກຫັນນ້ອຍ ເນື້ອແໜ້ນ ໆ ມີນ້ຳຫວານແກມສົ້ມອ່ອນ ໆ ມີຣົສມັນແຊບອີ່ຫລີ... ແຕ່ກໍ່ນັ່ງ ພັທັນໃຈບໍ່ອີ່ມ ກໍ່ ວ່າເທາະ ສຳຣັບພັທນາ, ກໍ່ໄດ້ຍິນສຽງຮ້ອງໄຫ້ດັງ ໆ ຂອງດອກໄມ້ ມາຈາກທິດທາງ ເບື້ອງຫລັງສຸດແຈຣົ່ວ.

-ໂອ້ຍ! ກູ ວ່າແລ້ວນ່າ ! ພັທຈົ່ມຂຶ້ນທັນທີ, ສາຍລົມເປັນຜູ້ແລ່ນນຳໜ້າ ໄ ວກວ່າ ພັທນາເສັຽອີກ ຕຣົງໄປຍັງສຽງຮ້ອງໄຫ້ນັ້ນ...

-ອ່ຳວ ! ດອກໄມ້ ! ຂຶ້ນໄປຫຍັງ ຢູ່ກົກໜາກຫັນພຸ້ນ !.. ລົງມາ ! ສາຍລົມຮ້ອງໃສ່.

-ດອກໄມ້ລົງບໍ່ໄດ້... ອ້າຍສາຍລົມ... ດອກໄມ້ລົງກົກໜາກຫັນບໍ່ໄດ້ !..." ດອກໄມ້ຮ້ອງໄຫ້ຢືນຍ້າຍຂາວົນວຽນ ຖອຍກົ້ນຂຶ້ນ ກົ້ນລົງ ໄປມາຕາມງ່າ.

-ອີ່ຖ່ອຍ !.. ມັນຂຶ້ນໄດ້ແລ້ວລົງບໍ່ໄດ້ ! ... ພັທຮ້ອງຮ້າຍຂຶ້ນໄປ, ສາຍລົມຍ່າງເຂົ້າໄປ ຢູ່ກ້ອງກົກໜາກຫັນ.

-ໄຕ່ລົງມາ... ອ້າຍຊິຮັບ... ໄຕ່ລົງໆມາ... ສາຍລົມບອກ ພາງອ້າແຂນຮັບ, ດອກໄມ້ ກໍຖອຍກົ້ນ ລົງມາຄ່ອຍ ໆພໍຂາດ່ງາ ທີ່ຈະໃຫ້ປຽບ ກໍຄົງເຫລືອເປັນລຳຕົ້ນ, ດອກໄມ້ຢ້ານຕົກ ກໍເລີຍໄຕ່ຂຶ້ນໄປອີກ.

-ໄຕ່ລົງໆມາແມ໋ !..ມຶງໄຕ່ຂຶ້ນແບບໃດ !.. ມຶງກໍໄຕ່ລົງມາແບບນັ້ນ !.. ພັທຍັງຮ້ອງຫົວເສັຽ ເໝືອນຈະເປັນໂຣກເສັນ ປະສາດ ເພາະນ້ອງ.

-ກໍມັນລົງບໍ່ໄດ້... ດອກໄມ້ຮ້ອງໄຫ້ ຍົ້ມຕົວໄປມາ ທົດລອງ ໄຕ່ລົງມາຕ່ຳ ໆ ອີກ.

-ໂດດ... ດອກໄມ້ ໂດດ ອ້າຍຮັບໄດ້ນ໋າ... " ສາຍລົມບອກ ຄ້າຍນ້ຳສຽງ ເອົາໃຈຊ່ວຍເຕັມທີ່, ດອກໄມ້ທຳໃຈແຂງ ກ່ອນຈະຕັດສິນໃຈ ໂດດລົງໆມາ... ພັທຟ້າວແລ່ນເຂົ້າ ໄປປະຄອງໆຊ່ວຍທັນທີ, ທີ່ຕົວຂອງໆສາຍລົມເພື່ອນເກົ ຈະຕັກຫງາຍ ລົ້ມລົງພື້ນ ໄປກັບຮ່າງຂອງໆດອກໄມ້ ທີ່ໂດດລົງມາກອດຄໍ...

-ອີ່ຊົ່ວ !..ພັທດຶງຜົມຍາວ ໆ ຂອງໆນ້ອງ ຢ່າງບໍ່ປານີ, ແລ້ວກໍເຕາະເຂົ້າເຕັມຊ່ວງ ໃສ່ກົ້ນນ້ອງໆສາວ ແຮງ ໆ.

-ພັທ !.. ໃຜບອກຕີນ້ອງແບບນີ້ !.. ສາຍລົມຫ້າມ, ດຶງເອົາດອກໄມ້ມາປ້ອງກັນ ໄ ວ້ເບື້ອງຫລັງ.

-ຄັນໃຈເ ວີ້ຍ !.. ມີເຣື່ອງທຸກຍາມ... ເອົາມັນມາ !.. ພັທອີກພອງຮ້ອງວ່າ, ດອກໄມ້ຮ້ອງໄຫ້ ເພາະແສບ ປາບ ໆ

ປວດປູ່ຫນັງຫົວ ທີ່ອ້າຍຕີງຜົມ.

ສາຍລົມກໍ່ບໍ່ເຂົ້າໃຈ ພັທເປັນຫຍັງເຖິງບໍ່ຮັກນ້ອງ, ທັ້ງ ໆ ທີ່ສາຍລົມຢາກໄດ້ ນອ້ງເຕັມທີ.
ຫາກສາຍລົມ ມີນ້ອງ ກໍ່ຄົງຈະຮັກນ້ອງພິລຶກ, ເຫມືອນສາຍລົມ ຮັກດອກໄມ້ ໃນຄວາມຮູ້ສຶກ
ທີ່ມີໃນຂນະນີ້.

- ເອີ້ ! ມັນຍັງບໍ່ແລ້ວ ! ໄປຮອດບ້ານ ກໍ່ຍັງຊິຫຍຸ້ງອີກ ລອງເບິ່ງ !.. ພັທຍັງວ່າ ມອງໆຫນ້າ ນອ້ງສາວ ແກມໂມໂຫ..
ອັນທີ່ ວ່າໄປບ້ານຍັງບໍ່ແລ້ວເພາະດອກໄມ້ ຈະໄປບອກແມ່ ທຸກຄັ້ງໆທີ່ອ້າຍຕີ ແລະ ພັທກໍ່ຈະຖືກແມ່ຮ້າຍ ຫລື
ຖ້າພົບ ວ່າດອກໄມ້ ຖືກເຂົາທຸບຕີ ເກີນເຫດ ພັທຈະຖືກແມ່ ໄລ່ຂ້ຽນຕີ ພຸ້ນແຫລະ...

-ກໍ່ນອ້ງໆຄົນດຽ ວແທ້ ໆ ພັທເອີຍ... ນອ້ງໆຜູ້ຍິງ ອີກຊໍ້າຫນ້າ ຖະນຸຖະນອມ...ສາຍລົມ ເຕືອນເພື່ອນ.

-ໂອ້ຍ ! ໂຕມັນ ບໍ່ມີອ້າຍບໍ່ມີນ້ອງນະ ມັນດີແລ້ວ... ເຮົາຍັງຄຶດ ຢາກຈະເປັນລູກຊາຍດຽວ ຄືໂຕຈັ່ງຊີ້... ມັນຈັ່ງ
ສະບາຍບີໄປ ! ພັທບອກ ຄວາມຮູ້ສຶກອອກມາ

-ເຂົາກໍ່ບໍ່ໄດ້ຖື ເພິ່ນເປັນອ້າຍເຂົາດອກ... ອ້າຍສາຍລົມພຸ້ນນະ ອ້າຍເຂົາ... ລາວບໍ່ເຄີຍຕີເຂົາຈັກເທື່ອ... ດອກໄມ້
ກໍ່ບໍ່ຢອມ, ຖຽງຄໍາອ້າຍຈົນໄດ້, ຫາກກໍ່ຄອຍຢືນລີ້ ຢູ່ທາງຫລັງຂອງສາຍລົມ...

ມື້ນີ້ສັງເກດຜິດປົກກະຕິ ດອກໄມ້ເຫັນພັທມາ ຜູ້ເປັນອ້າຍຫນ້າເສົ້າ ກັບຄືນບ້ານ,
ຄົນມັກຕີນ້ອງ ແບບພັທ ດອກໄມ້ ກໍ່ບໍ່ເຄີຍອາທອນ ຫລື ເປັນຫວ່ງທີ່ຈະຖາມເຫດການ...
ພັທອາດຈະສອບເສັງ ເຂົ້າວິທຍາລັຍບໍ່ໄດ້ ເພາະດອກໄມ້ ໄດ້ຍິນ ສາຍລົມມາຊວນພັທ ໄປເບິ່ງ
ຜົນການສອບເສັງຢູ່ໂຮງຮຽນ ດອກໄມ້ແລ່ນລົງຂັ້ນໄດ ຫນ້າງໍ້າ ໆ ຂອງອ້າຍ ດອກໄມ້ຮູ້ແລ້ວ
ວ່າພັທເສັງບໍ່ໄດ້...

ດອກໄມ້ແລ່ນໄປບ້ານສາຍລົມ ສາຍລົມຕ່າງຫາກ ທີ່ດອກໄມ້ຕ້ອງການຢາກຮູ້ ແລະ ຢາກຖາມວ່າ ສາຍລົມເສັງໄດ້ບໍ່ ?

-ອ້າຍສາຍລົມ... ອ້າຍສາຍລົມ... ດອກໄມ້ແລ່ນພົ້ນຫົວຂັ້ນໄດໄປ ເຫັນສາຍລົມ ກຳລັງນັ່ງຄູຍ ກັບພໍ່ ແລະ ແມ່ ຫນ້າຊື່ນຕາບານ.

-ອ້າຍເສັງເຂົ້າ ວິທຍາລັຍໄດ້ ດອກໄມ້... ສາຍລົມຮ້ອງບອກກ່ອນສາວນ້ອຍ ຮ້ອງຖາມ.

-ດອກໄມ້ ກຳລັງຈະມາຖາມພໍດີ ອ້າຍສາຍລົມ ເກ່ງຫລາຍ ວິເສດເລີຍ...

ດອກໄມ້ຖື ວິສາສະ ແລ່ນຂຶ້ນໄປສົມທົບ ກັບຄອບຄົວຂອງສາຍລົມ.

-ດອກໄມ້ເຫັນສີຫນ້າອ້າຍພັທແລ້ວ ອ້າຍພັທເສັງບໍ່ໄດ້ແມ່ນບໍ່ ?

ສາຍລົມຕອດຫົວ ມີສີຫນ້າເສົ້າໄປ ພ້ອມຄຶງຈະນຶກອີຕົນເພື່ອນເປັນແນ່.

-ຮີ ! ຮີ ! ສົມນ້ຳຫນ້າ ! ດອກໄມ້ດີໃຈ ທຳເອົາລູງອ້ວນ ແລະ ປ້າຄຳ ແປກໃຈ

-ເປັນຫຍັງດີໃຈແບບນັ້ນລະ ດອກໄມ້... ລູງອ້ວນ ພໍ່ຂອງສາຍລົມຖາມ

-ດອກໄມ້ບໍ່ມັກອ້າຍພັທ ອ້າຍພັທ ຄົນຮ້າຍຕີ ດອກໄມ້ເລື້ອຍ ໆ... ດອກໄມ້ ບອກຄວາມຈິງ ສຽງເສົ້າ ໆ .

ສາຍລົມ ຊວນດອກໄມ້ລົງມາ ຊັ້ນລ່າງພາງກໍ່ຊິ່ມ ວ່າ.

-ແລ້ວດອກໄມ້ຢ່າໄປ ວ່າຫຍັງໃຫ້ພັທລະ... ດຽວພັທຕີອີກຈັກຫນ່ອຍ...

ສາຍລົມເຕືອນເພາະຮູ້ດີຫາກດອກໄມ້ໄປເວົ້າ ວ່າ ເຍີ້ຍຫຍັນພັທອາດຕີ ນ້ອງສາວອີກ ສາຍລົມ ຮູ້ສຶກສົງສານ ແລະ ອີຕົນດອກໄມ້ ທຸກຄັ້ງທີ່ເຫັນ ດອກໄມ້ຖືກພັທຕີ ປູ່ຕໍ່ຫນ້າຕໍ່ຕາເຂົາ.....

ແລ້ວຂ່າວຂອງສາຍລົມ ກໍ່ດັ່ງເຂົ້າມາທີ່ ຫູຂອງດອກໄມ້ ສາຍລົມເສັງເຂົ້າ ວິທຍາລັຍໄດ້ ຈະໄດ້ລົງໄປຮຽນ ຢູ່ທີ່ຫລວງພຣະບາງ... ຂ່າວຂອງພັທນາ ຫາຍງຽບເສັງບໍ່ໄດ້ນັ້ນເອງ.

-ດອກໄມ້ ຄິດໄປແລ້ວ ບໍ່ຫນ້າຈະພາວັນນາ ໃຫ້ອ້າຍສາຍລົມ ໄດ້ຜູ້ດຽວ..." ດອກໄມ້ ບອກສຽງເສົ້າ ໆ.

-ຫມາຍຄວາມ ວ່າຈັ່ງໃດ ? ສາຍລົມບໍ່ເຂົ້າໃຈ, ດອກໄມ້ແອບມາຄູຍຫລີ້ນ ກັບ ສາຍລົມຕາມລຳພັງ ຕລອດທີ່ພັທ ໄດ້ຮັບຂ່າວ ການເສັງບໍ່ໄດ້ ຈຶ່ງເກັບຕົວງຽບ.

-ກໍ່ຄັນ ອ້າຍພັທ ເສັງເຂົ້າ ວິທຍາລັຍໄດ້ ກໍ່ຄົງຈະໄດ້ລົງໄປຮຽນຢູ່ທີ່ຫລວງພຣະບາງ ຄືກັບອ້າຍສາຍລົມ... ດອກໄມ້ ຈະບໍ່ຖືກອ້າຍພັທຕີອີກ... ໃຫ້ລາວໄປໄກ ໆ.

ສາຍລົມ ກັບ ພັທອາຍຸ ສ່ຳກັນ ຫາກສາຍລົມ ເປັນຄົນຄ້ອນຂ້າງຮຽບຮ້ອຍ ແບບຜູ້ໃຫຍ່ ນິສັຍນິ້ມ ນວນ ແລະ ອ່ອນຫວານ ຕາມດອກໄມ້ສັງເກດ... ຊຶ່ງຜິດກັບພັທ ວື້ ວ້າ ຫລີ້ນຂ້ອນຂ້າງ ເດັກຮ້າຍທາຣຸນເກ່ງ... ຕີກໍ່ທີ່ນຶ່ງ.

-ແລ້ວອ້າຍສາຍລົມ ຈະລົງໄປເມືອງຫລວງມື້ໃດ... ໄປຢູ່ນຳໃຜ ? ດອກໄມ້ຍັງຖາມ ຮູ້ສຶກ ວ້າເວ.

-ອີກອາທິດນຶ່ງ... ອ້າຍຈະໄປຢູ່ນຳອາວ... ອ້າຍມີອາວຢູ່ຫລວງພຣະບາງ.

-ດອກໄມ້ ຄົງຄິດຮອດຫາອ້າຍສາຍລົມ ພິລຶກລະ...

ສາຍລົມກໍ່ຍັງຫົວອອກມາ ຢູ່ດີກັບຄຳເວົ້າຂອງດອກໄມ້... ແລະ ແລ້ວການຈາກໄປຮຽນ ຢູ່ວິທຍາລັຍ ຂອງສາຍລົມ ຈິນທຳເອົາດອກໄມ້ຮ້ອງໄຫ້... ເພາະຕໍ່ໄປນີ້

ຫາກພັທຕິດອກໄມ້... ດອກໄມ້ ຈະບໍ່ມີສາຍລົມ ຄອຍປອບໃຈ, ຄອຍຕໍ່ຕ້ານ ປອ້ງກັນ, ເອົາອົກເອົາໃຈທຸກຢ່າງ ທີ່ສາຍລົມມອບໃຫ້ຈົນດອກໄມ້ຊຶ້ງສນິດ ຄືສາຍລົມ ປຽບເຫມືອນດັ່ງອ້າຍແທ້ ໆ... ບໍ່ແມ່ນພັທ.

ແຕ່ທຸກໆປີສາຍລົມກໍຈະກັບຄືນມາ ຢູ່ບ້ານນຳພໍ່ແມ່ ຫລັງໂຮງຮຽນປິດ. ພັທພຍາຍາມແລ້ວ ພຍາຍາມເລົ່າ ສາມປີ ກໍເສັງເຂົ້າ ວິທຍາລັຍບໍ່ໄດ້ ທັ້ງ ໆ ທີ່ທຸກ ໆ ປີ ສາຍລົມກັບມາບ້ານ ຈະມາບອກສອນ ພັທຮຽນອີກ... ພັທທໍ້ແທ້ໃຈ... ດຽວນີ້ພັທ ກັບໄປເຮັດອາຊີບ ຫາກິນ ໃນດ້ານຂັບເຮືອຈ້າງ ຄົນໂດຍສານຂ້າມຂອງ ໄປຣະຫວ່າງຫ້ວຍຊາຍ ກັບ ຊຽງຂອງ.

-ດອກໄມ້ ບໍ່ຖືກພັທຕິແລ້ວ ຫວາ ? ນີ້ຈະເປັນຄຳຖາມທຸກ ໆ ປີ ທີ່ສາຍລົມ ກັບມາຢາມບ້ານ, ແຕ່ລະຄັ້ງ ແຕ່ລະປີທີ່ຜ່ານໄປ... ຜ່ານໄປສາຍລົມ ກັບມາຢາມກໍ່ ຈະພົບດອກໄມ້ ນັບປີ ນັບເປັນສາວຂຶ້ນ... ສາ ວຂຶ້ນ.

-ມຶງເບິ່ງດີ ໆ ແລ້ວສາຍລົມ... ອີ່ດອກໄມ້ມັນ ໑໔ ເຂົ້າ ໑໕ປີແລ້ວ... ສໍ່ານີ້ ແຕ່ສມັຍກ່ອນ ເອົາຜົ ວກໍໄດ້... ພັທ ວ່າຕອນນຶ່ງ ທີ່ສາບລົມກັບມາຢູ່ບ້ານ... ຮ່າງອວບຂາວຫນ້າຮັກ ຍິ້ມຫວານ ໆ ປະຈົບ ປະແຈງ ສາຍລົມ ເຫັນຕິດຕາ ເປັນປະຈຳ.

-ອ້າຍສາຍລົມ ລົງໄປອາບນ້ຳນຳກັນບໍ່ ? ດອກໄມ້ ຊັກຊວນໃຫ້ຄວາມສນິດສນົມ ຄືເກົ່າ ເຫມືອນເດັກ... ສາຍລົມ ພາດອກໄມ້ ລອຍຫລິ້ນຢູ່ນ້ຳຂອງໆປີນຂຶ້ນເຮືອນແພ ທີ່ມີຢູ່ແຄມຂອງ ສນຸກນຳກັນ ມາຕລອດ.

-ປີຫນ້າກັບປີໃນ ອ້າຍກໍຄືໆຈະບໍ່ໄດ້ກັບມາ ບ້ານເລີຍຄືໆບໍ່ໄດ້ເຫັນຫນ້າດອກໄມ້ອີກ ຕັ້ໆສອງປີ... ສາຍລົມ ວ່າພາງນັ່ງຄຽງຂ້າງ ໆ ຢູ່ແຄມແພ ກັບດອກໄມ້ ດອກໄມ້ໃຊ້ມື ພັດຖູຂີ້ໄຄລຳແຂນຂາວ ໆ ນັ້ນ.

-ເປັນຫຍັງ ? ດອກໄມ້ຄືວຫຍຸ້ງ ຫລຽວມອງເບິ່ງຫນຸ່ມວັຍ ໑໗ປີຂອງສາຍລົມ.

-ກໍອີກສອງປີອ້າຍກໍຈະເສັງບັກ ອ້າຍຈະຕ້ອງຈ້າງຮຽນເພີ້ມຢາມພັກຮຽນອີກ ຢູ່ພຸ້ນ.

-ດອກໄມ້ ຈະພາວັນນາ ໃຫ້ອ້າຍສາຍລົມເສັງໄດ້...ດອກໄມ້ ວ່າ.

ແລ້ວ ໃນຂະນະທີ່ ສາຍລົມສອບເສັງ ເອົາໃບປະກາສນີຍະບັດ ມັທຍົມບໍຣິບູນໄດ້ແລ້ວ ສາຍລົມເປັນຫນຸ່ມພຽບພ້ອມ ດ້ວຍຮູບຮ່າງ ຫນ້າຕາເຈົ້າຊູ້ໃນ ວັຍ໒໐ປີ... ເຂົາກັບຄືນມາຢາມພໍ່ແມ່... ແລ້ວປີນີ້ເອງ... ທີ່ເຂົາພົບດອກໄມ້ ສາວນ້ອຍ ຜູ້ວັຍ ໑໗ປີ ຊຶ່ງມີຄວາມງາມອັນປະທັບຕາ ຫນ້າຮັກຫນ້າຖນຸ ຖນອມ ຍິ່ງກວ່າ ທີ່ສາຍລົມ ເຄີຍພົບເຫັນມາ ແຕ່ນ້ອຍ ໆ. ຮ່າງນ້ອຍຂາວ ໃນສີ້ນອ້ຽງເອິກ... ລອຍຕົວມຸດຫົວຂຶ້ນ ໂປໂລທີ່ແຄມຝັ່ງນໍ້າ... ແລ້ວກໍແຫງນຫນ້າ ເມີ້ມອງໄປ ທີ່ຫົວຕາລິ່ງພົ້ນ... ດອກໄມ້ ເຫັນຫນຸ່ມ ຜິວຂ້ອນຂ້າງຂາວ ໃນຊຸດສົ້ງສີຟ້າແກ່ ເສື້ອຢືດສີຂາວແຂນສັ້ນ ຢືນມືໄຄວ່ຫລັງ ແລຊ້າຍແລຂວາ ສອດສາຍຕາລົງມາດັ່ງຈະຊອກຫາໃຜຈັກຄົນ ນິ່ງທີ່ແຄມນໍ້າຂອງ... ດອກໄມ້ໃຊ້ມື ສີຕາ ໄປມາ, ຫົວໃຈເຕັ້ນແຮງ, ລຸກຂຶ້ນຈາກຣິມຝັ່ງນໍ້າແລ້ວ ກໃຊ້ຫລັງມື ກັນຕໍ່າແສງແດດ ທີ່ຮູ່ງມາເຫລື້ອມຕາ ໃນຂນະມອງຂຶ້ນໄປທີ່ຫົວຕາລິ່ງ... ສອງປີທີ່ບໍ່ໄດ້ພົບກັນ.

-ອ້າຍສາຍລົມ ! ອ້າຍສາຍລົມແທ້ ໆ ! ດອກໄມ້ຮ້ອງສຽງດັງໂວຍວາຍ ແລ່ນຂຶ້ນຕາລິ່ງໄປ ດີໃຈຈົນບອກບໍ່ຖືກ.

-ດອກໄມ້ ! ສາຍລົມຍິ້ມກວ້າງ ແລ່ນລົງໄປຮັບເຊັ່ນກັນ ຫາກແຕ່ດອກໄມ້ ຕີນປຽກນໍ້າ ພໍແລ່ນມາຮອດທີ່ສາຍລົມ ແລ່ນລົງໄປຮັບ, ດອກໄມ້ກໍພລາດລົ້ມ ດຶງແຂນສາຍລົມລົ້ມ ຕລູດລົງໄປ ທີ່ແຄມແມ່ນໍ້າ ພ້ອມ ໆກັນ... ສາຍລົມຟ້າວກອດດອກໄມ້ ໄ ວ້ໃນອ້ອມແຂນ ພາກັນໄປນອນ ຢູ່ກັບພື້ນຂີ້ຊາຍ.

-ດອກໄມ້... ດອກໄມ້ແທ້ ໆ ອ້ານີ້ ! ສາຍລົມ ກໍຮູ້ ວ່າແມ່ນດອກໄມ້... ຫາກກໍຕ້ອງ ຢໍ້າຖາມຄືນອີກ ຢ່າງບໍ່ເຊື່ອ... ສອງປີຫລັ່ງນີ້ ຊ່າງປ່ຽນແປງດອກໄມ້ ໃນຮູບໂສມໃຫມ່ ຢ່າງຫນ້າມະຫັສຈັນ ພິລຶກ ຮູບຮ່າງຫນ້າຕາຫວານຊຶ້ງ ງົດງາມ ຜິ ວພັນຂາວເປ່ງປັ່ງ...

-ໂອ... ດອກໄມ້... ເຂົາຄວນຄາງ ຊື່ນີ້ອອກມາຄ້າຍລະເມີ.

-ເບິ່ງຫຍັງ... ແນມຫຍັງດອກໄມ້ແບບນີ້ ? ສາວນ້ອຍຟ້າວລຸກຈາກ ສາຍຕາ ທີ່ສາຍລົມແນມເບິ່ງຕົນ ແລ້ວກໍກຳຂີ້ຊາຍ ຕົບແປະລົງໃສ່ສອງແກ້ມຂອງສາຍລົມ ໃນທຳນອງ ແກ້ເຂີນອາຍ ຕໍ່ສາຍຕາ ທີ່ສາຍລົມມີໃຫ້ຕົນ ວ່າງກີ້. ທັງສອງມອງໜ້າກັນແລ້ວ ກໍຫົວ ສາຍລົມລົງໄປອາບນ້ຳ ລ້າງໜ້າລ້າງຕົວ ທັງຊຸດ.

-ອ້າຍສາຍລົມ ມາເທື່ອນີ້ຄືບໍ່ບອກລ່ວງໜ້າ... ອີກຢ່າງຕັ້ງສອງປີທີ່ອ້າຍສາຍລົມ ບໍ່ກັບມາບ້ານ... ດອກໄມ້ຖ້າເກືອບຕາຍ.

ສາຍລົມມອງຮ່າງຂາວອວບອັດ ໃນສິ້ນອັ້ງງເອິກ ທີ່ປົກປອນຕົດແນບສນິດ ກັບເນື້ອ ຈຶ່ງສາມາດ ມອງເຫັນຮູບຮ່າງ ອັນໄດ້ສ່ວນສັດນັ້ນ ຖະນັດຕາ.

ດອກໄມ້ຍ່າງຂຶ້ນ ໄປຈັບຜ້າເຊັດໜ້າ... ບັງຕົວຢູ່ພຸ່ມຫຍ້າດົກສູງ ຜັດປ່ຽນເສື້ອຜ້າ...

ສຽງຈັກທີ່ດັງ ໆ ມາແຕ່ກາງຂອງພຸ້ນ ເປັນເຮືອຈັກຫາງຍາວຂອງ ພັທນາທີ່ບັນຈຸ ຜູ້ໂດຍສານ ຂ້າມຟາກມາຮອດ... ເຮືອຂອງພັທ ແລ່ນເຂົ້າໄປຈອດ ທີ່ທ່າເບື້ອງເໜືອພຸ້ນ.

-ດອກໄມ້... ພັທເຊົາຕີດອກໄມ້ແລ້ວ ວ່າ ? ສາຍລົມຍັງຖາມ ເມື່ອເມີນມອງໄປ ເຫັນພັທຊຶ່ງ ກຳລັງວົນ ນຳຜູ້ໂດຍສານ ຢູ່ໃນເຮືອ... ດອກໄມ້ຍິ້ມຂ້ອນຂ້າງອາຍ ພາງ ວ່າ : ເຊົາຕີແລ້ວ... ບໍ່ເຄີຍຕີຈັກເທື່ອ... ຫາກແຕ່... ສຽງດອກໄມ້ຂາດຫາຍໄປ ຄ້າຍຄິດໄດ້... ສາຍລົມແອບອົມຍິ້ມ ເຫັນອາການໜ້າແດງ ຂອງດອກໄມ້... ດອກໄມ້ອາດມີຄວາມລັບ ທີ່ຄິດວ່າເປັນຄວາມອາຍ ສຸດຍອດເປັນແນ່ ຫາກເຂົາຮູ້...

-ເປັນຫຍັງ... ຄືຮຽນຂີ້ອາຍແລ້ວດຽວນີ້... ສາຍລົມທ້ວງເອົາດື້ ໆ ຫາກກໍເຂົ້າໃຈ ເປັນສາວແລ້ວ ກໍຕ້ອງຮູ້ຈັກອາຍ ເປັນຂອງທັມດາ. ແມ່ນແລ້ວ... ດອກໄມ້ກຳລັງຄິດ, ຫາກສາຍລົມຮູ້ຄວາມຈິງເຂົ້າໃນ ຄວາມຫຶງຫວງຂອງພັທ ຜູ້ເປັນອ້າຍ ທີ່ມີຕໍ່ນ້ອງສາວ ພິລຶກຕອນນີ້, ທົດແທນ ທີ່ພັທທຸບຕີນ້ອງເມື່ອຍາມນ້ອຍ... ພັທຫ້າມ ຜູ້ບ່າວຂຶ້ນມາລົມນ້ອງສາວ

-ຜູ້ຈະມາເປັນແຟນມຶງນະ ອີ່ດອກໄມ້ຈະຕ້ອງເປັນສາຍລົມ... ມັນທຸກມັນຍາກ ເອົາໃຈມຶງມາແຕ່ນ້ອຍ...

ທັງຈູງທັງເຈັ່ງ... ມີໆສິມຄວນທີ່ຈະໄດ້ໄປຢູ່ນຳມັນ. ດອກໄມ້ກຳລັງຄິດເຖິງຄຳນີ້ ຂອງພັທຜູ້ເປັນອ້າຍ...

ນັບແຕ່ພັທຮູ້ຈັກຫາເງິນ, ດອກໄມ້ ກໍນັບເປັນສາວ, ພັທກັບຮັກນ້ອງ ຫວງນ້ອງ... ຈະຄອຍປົກປ້ອງ ຮັກສາ ດູທ່າທີ ອ້າຍບ່າວທີ່ມາເລາະ ໆ ວຽນ ໆ ມອງດອກໄມ້ ນັຍຕາເປັນມັນ... ໃຜບໍ່ເຂົ້າທ່າພັທ ວາງໆເຊີງ ເຂົ້າໄປລັດຫນ້າ ໂລດ ຕໍ່ວ່າຄຳຊູ່ເຂັນອ້າຍບ່າວ ຫນ້າຂວ້າມ ໄປພຸ້ນແຫລະ.

ອາການຂອງດອກໄມ້, ສາຍລົມຮູ້ດີ ພັທອາດຈະຊູ່ນ້ອງສາວ ຈະໃນທຳນອງແບບດຽວກັບພັທຊູ່ສາຍລົມຫລືບໍ່ ? ເພາະທຸກປີ ທີ່ສາຍລົມ ກັບມາຢາມບ້ານ ພັທ ຈະແນບຄຳເວົ້າໃຫ້ເພື່ອນສເມີ...

-ເປັນໃດສາ ວເມືອງຫລວງກັບສາວທ້ອຍຊາຍ ຣະ! ສາຍລົມ... ທຸກນຳມັນແຕ່ນ້ອຍ ເຈັ່ງມັນຫລັງຂົດຫລັງໂຂ... ໂຕກໍຄວນຊິເອົາອີ່ດອກໄມ້ ໄປລ້ຽງເປັນເມັຽ, ມັນຈະໄດ້ຕອບແທນບົວຣະບັດໂຕຄືນແມ່ນບໍ່ລະ... ເຮົາຊິຍົກ ດອກໄມ້ໃຫ້ຟຣີ...

ພັທເ ວົ້າຈິງເວົ້າຈັງ... ເຂົ້າທ່າເຂົ້າທາງມາຕລອດ, ບໍ່ເສັງຖ້ຽວທີ່ນ້ອງສາວ ຜູ້ງາມອີກ, ມັດຫົວໃຈສາຍລົມ ບໍ່ຕ້ອງສົງສັຍ.

-ໄປຫາອ້າຍພັທນໍ...

ດອກໄມ້ຊັກຊວນ, ພາສາຍລົມເລາະລຽບຝັ່ງໄປຫາອ້າຍ, ພັທເລືອບແລເຫັນເພື່ອນເຕັ້ນຂະໂຍງຂະເຍງດີໃຈ ທັງດຶງ ສາຍລົມຂຶ້ນເຮືອຫາງຍາວ ຕິດຕາມດ້ວຍດອກໄມ້ ພັທຕິດເຄື່ອງຈັກພາເຮືອ ພາເພື່ອນຂີ່ເລາະລິ່ວ ໆ ຢູ່ກາງນ້ຳຂອງຢ່າງຊ່ຳ ນິ ຊ່ຳນານ ສິ່ງສຽງຮ້ອງກ້ອງດັງຫົວອີກກະທຶກ...

-ເປັນໃດສາຍລົມ ! ດອກໄມ້ ປີນີ້ງາມຫລາຍ ພໍເອົາໄປຢູ່ນຳໄດ້ແລ້ວ.

-ອ້າຍພັທ !ຢ່າບ້າຫລາຍ !

ດອກໄມ້ຫນ້າແດງ ສາຍລົມຍິ້ມກວ້າງ ມອງດອກໄມ້ ດ້ວຍແວວສົງສານອີຕົນ ທີ່ຖືກອ້າຍໂຄສນາ ດອກໄມ້ ນັ່ງຢູ່ກາງເຮືອ ສາຍລົມນັ່ງຢູ່ຫົວເຮືອ ປິ່ນຫນ້າເຂົ້າຫາກັນ ຈຶ່ງພົບດອກໄມ້ ມີອາການຂ້ອນຂ້າງ ວາງຕົວບໍ່ຕິດ ໃນຄຳຍົວະເຍົ້າ ຂອງຜູ້ເປັນອ້າຍ.

ສາຍລົມ ມາຫາດອກໄມ້ແຕ່ເຊົ້າ, ບໍ່ພົບດອກໄມ້,ພົບແມ່ດອກໄມ້ບອກ ວ່າດອກໄມ້ ລົງໄປຊັກເຄື່ອງ ຢູ່ນ້ຳຂອງ... ສາຍລົມຈຶ່ງຖືຜ້າເຊັດຫນ້າ ຕຽມຕົວລົງໄປທີ່ແມ່ນ້ຳ, ສາຍລົມເຫັນດອກໄມ້ ກຳລັງໄລເຄື່ອງ ຢູ່ໃນເຮືອນແພທີ່ແຄມ ຂອງ... ດອກໄມ້ ນຸ່ງສິ້ນ ອ້ຽງເອິກ ກຳລັງປັ້ນເຄື່ອງ ບິດກ້ຽວໄປມາ, ເປັນພາບ ທີ່ສາຍລົມ ແອບມອງແລ້ວ ມີຄວາມຮູ້ສຶກໃຫມ່ ໆ ຂຶ້ນມາຫລາຍ ໆ ຢ່າງໃນຫົວໃຈ... ເຂົາຮັກດອກໄມ້ ຕອນນີ້ ບໍ່ແມ່ນຮັກດອກໄມ້ ແບບຍາມນ້ອຍ... ແຕ່ເປັນຮັກໃນດ້ານຊູ້ສາວ ປະກອບກັບ ອາດີດທີ່ເຄີຍໄດ້ຢູ່ໃກ້, ໄດ້ເອົາອົກເອົາໃຈ, ສນິດສນົມ, ເປັນອາດີດ ທີ່ຫນ້າຮັກ ແລະ ອ່ອນຫວານ ທີ່ເຂົາມີຕໍ່ສາວນ້ອຍ

ຕອນນັ້ນ ມັນມາກະຕຸ້ນຄວາມຮູ້ສຶກຂອງເຂົາໃນຕອນນີ້... ດອກໄມ້ຄືທຸກສິ່ງ ທຸກຢ່າງ ຂອງສາຍລົມ... ເປັນຄວາມຮັກ ຄວາມສເນ່ຫາ ທີ່ປະກອບໄປດ້ວຍ ຄວາມເອັນດູ ແລະ ສົງສານ ເຕັມລົ້ນປ່ຽມໃນຫົວໃຈ... ສາຍລົມຄິດສນຸກ ຄ່ອຍ ໆ ລອຍລົງນ້ຳແລ້ວ

ກໍດຳມຸດຕົວ ໄປໂປໂລຫົວ ຢູ່ແຄມເຮືອນແພທີ່ດອກໄມ້ ນັ່ງງອຍປັ້ນເຄື່ອງຢູ່.

-ອ໊າຍ ! ... ດອກໄມ້ຕົກໃຈ ສາຍລົມໂປໂລຫົວ ຟົດນ້ຳໄປມາມືຈັບແຄມແພ ສັ່ງສຽງຫົວ ອອກມາຄ່ອຍ ໆ.

-ອ້າຍສາຍລົມ... ດອກໄມ້ຕົກໃຈຫມົດ... ສາວນ້ອຍມືທາບອົກ ຟົນຍິ້ມອອກມາ ວ່າແມ່ນເຂົາ.

-ມາຊັກເຄື່ອງແບບນີ້ ສູ່ມື້ ຫວະ ດອກໄມ້ ?

-ທຸກ ໆ ເຊົ້າອາບນ້ຳພ້ອມ ເປັນປະຈຳວັນ.

ດອກໄມ້ບອກກໍຄືໆຊັກພໍດີແລ້ວ, ສາຍລົມເຫັນເຄື່ອງທຸກຕົວປັ້ນຂອດກ້ຽວ ຢູ່ໃນແອ່ງຫມົດແລ້ວ.

-ມາອາບນ້ຳນຳກັນຕີ ດອກໄມ້... ຫລາຍປີໄດ໋ເນາະ ເຮົາບໍ່ໄດ້ລອຍນ້ຳຫລິ້ນນຳກັນ.

ສາຍລົມຊັກຊວນ ພາງກໍພຍຸງຕົວຂຶ້ນ ໄປນັ່ງຢູ່ແຄມແພ ຄຽງຂ້າງດອກໄມ້ ຫ່າງໆພໍຄວນ ຍ່ອນຕີນຈຸ່ມລົງນ້ຳ, ຫາກຈະຄິດເຖິງ ຍາມນ້ອຍແລ້ວ ຜົມປຽກເກົ່າ ປຽກໃຫມ່ເລີຍ ໆ ຜູ້ສອນໃຫ້ດອກໄມ້ ລອຍນ້ຳ ແມ່ນສາຍລົມຕ່າງໆຫາກ, ບໍ່ແມ່ນພັທ, ທັງສາມ ລົງມາອາບນ້ຳ ນຳກັນສເມີ, ພາບນີ້ງຍັງຕິດຕາ ສາຍລົມ ເຂົາຫວນຄິດເຖິງ ຄວາມຫລັງ... ສາຍລົມ ກັບ ດອກໄມ້ໄປເກັບດອກຜາງມາຫລິ້ນກັນ, ທັງສອງ ຈະເອົາເກສອນ ຂອງດອກຜາງ ມາເກາະດຶງກັນສເມີ, ຂອງໃຜ ຫັກກ່ອນ ກໍແປ ວ່າແພ້, ຜູ້ຊນະ ກໍຈະໄດ້ສັບ ຫມາກກອກໃສ່ຫົວ, ຕອນນີ້ ສາຍລົມ ຊນະຫ້າງທ່າ ຈະໃຊ້ຫມາກກອກ ໄປສັບຫົວ ຂອງດອກໄມ້, ພັທນາ ແລ່ນເຂົ້າມາຮ່ວມກຸ່ມ ພາງກໍຖາມໂວຍວາຍ.

-ໃຜຊນະ... ໃຜຊນະ... ໂຕຫ ວະສາຍລົມ ?

-ອື໊ມ... ຂອງດອກໄມ້ກົດກ່ອນ... ສາຍລົມບອກ

-ມະ ກົ້ມຫົວມາ... ເຮົາຕີແທນເດີ້ ສາຍລົມ...

ພັທບໍ່ຟັງຄຳອະນຸຍາດຈາກເພື່ອນ, ກໃຊ້ຫມາກກອກຟາດໂປກ ໆ ໃສ່ຫົວຂອງ ດອກໄມ້ ແຮງ ໆ.

-ໂອ໋ຍ ! ເຈັບ... ດອກໄມ້ຮ້ອງ.

- ຫວ໋າ... ພັທ... ໃຜບອກສັບຫົວດອກໄມ້ແບບນັ້ນ ! ເຮົາບໍ່ໄດ້ບອກໂຕສັບ ແທນເຮົານະ!

ສາຍລົມເຕືອນເພື່ອນ... ພັທນາ ຫົວຢ່າງລືມໃຈ ພາງກນັ່ງເຈົ່າ ເບິ່ງທັງສອງ ເກາະດຶງເກສອນກັນຕໍ່... ຮອດຕອນນີ້ມາ ເກສອນຂອງສາຍລົມ ກຍັງຊນະ ຂອງດອກໄມ້ຢູ່ດີ.

-ເອົ໋າ... ດອກໄມ້... ອ້າຍບໍ່ສັບຫົວດອກໄມ້ດອກ ອ້າຍໃຫ້ດອກໄມ້ສັບ ແທນອ້າຍທີ່ຫົວຂອງພັທ ກົ້ມຫົວມາ ພັທ ໃຫ້ດອກໄມ້ຕີຄືນ...

ຕອນນີ້ສາຍລົມຂະນາບເພື່ອນ ພັທກໍເລີຍຖືສນຸກໄປນຳ ດອກໄມ້ດີໃຈ ຈະໄດ້ສັບຫົວອ້າຍ.

-ຢ່າ... ຢ່າສັບຫົວຜູ້ຊາຍ ມັນບາບ ! ພັທນາບອກນ້ອງສາວ.

-ຊິໃຫ້ສັບໃສລະ !

ດອກໄມ້ກຫືນ ຢາກສັບຕອບຄືນແຮງ ໆ ພັທເດ່ຂາມາ.

-ສັບຫົວເຂົ່າ...

ດອກໄມ້ບໍ່ສັບ ຫາກແຕ່ຍົກຍຸ້ມເຂົ້າເຕັມເລັບນັ້ນແຮງ ໆ ຈົນພັທນາ ດິດດິ້ນແພດ ໆ ແລ້ວ ດອກໄມ້ ກລຸກ ພາຕົວໄປລີ້ ຢູ່ເບື້ອງຫລັງຂອງສາຍລົມເພາະ ຢ້ານອ້າຍຕີ.

-ໃຜບອກຍົກແຮງໆແບບນີ້ !" ພັທ ວ່າ ສາຍລົມຍິ້ມກວ້າງ.

-ບໍ່ເຮັງແຫລະ... ຫາກເພິ່ນອານຸຍາດ ໃຫ້ເຂົາດີດຫຳເພິ່ນໄດ້... ເຂົາກໍຈະໃຊ້ສາມນີ້ວ ນີ້ແຫລະ ດີດຫຳເພິ່ນ ໃຫ້ຫົວ ສອີກ ໆ ໄປພຸ້ນນຳ...

ສາຍລົມຫົວສຽງດັງ... ດອກໄມ້ເວົ້າກວນອ້າຍ ອອກມາ ກໍເປັນຕອນນີ້ທຳເອົາພັທນາ ຫົວໃສ້ຄິດ ໃສ້ໂຂ ໄປກັບສາຍລົມ...

-ອ້າຍສາຍລົມຄິດຫຍັງ ? ດອກໄມ້ສວດສາຍລົມຂຶ້ນ ເຂົາຍິ້ມ.

-ອ້າຍຄິດເຖິງຕອນ ດອກໄມ້ຍັງນ້ອຍ...

-ຄິດເຖິງຕອນໃດ... ຕອນໄດ້ເຈັ່ງດອກໄມ້ ວ່າ ອ້າຍສາຍລົມຄົງຄິດ ວ່າດອກໄມ້ ຂີ້ໂຍ້ຍນໍ ຖືກອ້າຍຕີເລີຍ ໆ ແລ້ວ ອ້າຍສາຍລົມ ກໍເປັນຜູ້ເຈັ່ງຜູ້ຊ່ອຍເລີຍ ໆ ອີກ...

-ກໍຄິດເຖິງທຸກຢ່າງ ທີ່ຜ່ານມາ ຄິດເຖິງຕອນສັບຫົວເຂົ່າ ຂອງພັທ ອ້າຍຍັງຫົວບໍ່ແລ້ວ ຄິດເຖິງເທົ້າທຸກ ວັນນີ້ ດອກໄມ້ ຊິໃຊ້ສາມນີ້ວ ດີດຫຳຂອງພັທ.

ດອກໄມ້ອົດຍິ້ມອອກມາບໍ່ໄດ້ ຄຳນີ້ອາດຈະລືມໄປແລ້ວຕັ້ງນານ ຫາກສາຍລົມ ກໍເກັບມາ ເວົ້າຄືນ ດອກໄມ້ກໍພໍຈື່ໄດ້ ດອກໄມ້ເວົ້າໄດ້ເພາະເຄີຍຟັງນິທານ ພໍ່ສ່ຽວຂ້າ ກັບພໍ່ສ່ຽວລາວ... ພໍ່ສ່ຽວຂ້າໃຊ້ສາມນີ້ວ ດີດຫຳຂອງລູກພໍ່ສ່ຽວລາວ ຄິດວ່າ ສາມນີ້ວຄົງແຮງພິລຶກ ແຕ່ຕຣົງຂ້າມ ພໍດີດໄປກໍເຮັດເອົາລູກຊາຍ ພໍ່ສ່ຽວລາວຫົວແອກ ໆ ດ້ວຍຄວາມດຽມ ນັ້ນເອງ...

-ດອກໄມ້... ອ້າຍມີເຣື່ອງປາກລົມດອກໄມ້... ດອກໄມ້ຟັງອ້າຍບໍ່ ?

ສາຍລົມຍັງເປັນຄົນປາກນຶ້ມນວນ ອ່ອນຫວານຢູ່ເຫມືອນເດີມ, ດອກໄມ້ຍອມຮັບວ່າ ແຕ່ນ້ອຍ ສນິດສນົມ ກັບສາຍລົມແທ້, ຈົນກະທັ້ງ ທີ່ສາຍລົມຈາກໄປຮຽນ ທີ່ຫລວງພະບາງຄັ້ງທຳອິດ ດອກໄມ້ກໍຍັງຮ້ອງໄຫ້ນຳ... ແຕ່ມາລະຍະ ສອງປີຫລັງນີ້

ທີ່ບໍ່ໄດ້ພົບກັນ ຄວາມຫ່າງເຫີນ ກໍເລີຍທຳເອົາດອກໄມ້ຮູ້ວ່າ ມັນຫນ້າຈະມາ ຈາກ ເພາະດອກໄມ້ ເປັນສາວແລ້ວ ເຂົາກໍ ເປັນບ່າວແລ້ວ... ຄ ວນແກ່ການ ຣະມັດຣະວັງ ໃຫ້ຄວາມສນິດຊິດໃກ້ ບໍ່ໄດ້ແລ້ວ ເຫມືອນດັ່ງ ຍາມນ້ອຍ...

-ອ້າຍສາຍລົມ ຊິ ວ່າຫຍັງ ?

ດອກໄມ້ເອີ່ຍ ພ້ອມທັງຍິ້ມນ້ອຍ ໆ ຢ່າງ ລະມຸນລະໄມ.

-ຫາກອ້າຍເສັງເຂົ້າຮຽນຕຳຣວດໄດ້... ຮຽນຈົບມາຍາມໃດ... ດອກໄມ້ແຕ່ງດອງ ກັບອ້າຍນໍ້... ຕົກລົງ...

-ອູຍ... ເວົ້າເປັນຕາອາຍແທ້...

ດອກໄມ້ຖີ້ມຕົວລົງນໍ້າ ລອຍອອກໄປກາງໆຂອງ, ເຂົາມາຂໍແຕ່ງງານນຳດີ້ ໆ ຫລື ພັທເປັນຜູ້ຂູ່... ສາຍລົມລອຍນໍ້າໄປຕິດ ໆ ເຂົ້າໄປຊິດໃກ້.

-ອ້າຍພັທຂູ່ອ້າຍສາຍລົມ ວ່າ ? ດອກໄມ້ຖາມຕາມຊື່ ພຍາຍາມລອຍອອກຫ່າງຈາກເຂົາ.

-ແນ່... ອ້າຍເຂົ້າໃຈແລ້ວ... ເປັນຫຍັງດອກໄມ້ຈຶ່ງຮູ້ຈັກ ຖາມແບບນີ້ ພັທຂູ່ດອກໄມ້ຄືກັນແມ່ນບໍ່ ?...

ທັງສອງລອຍເຂົ້າໄປຈ່ອງແພເຫມືອນເດີມ.

-ບອກອ້າຍດູ່... ພັທຂູ່ຫຍັງດອກໄມ້ ?

-ຂູ່ ວ່າ... ຜົວຂອງດອກໄມ້ຈະຕ້ອງເປັນອ້າຍສາຍລົມ... ອີ່ຫລືນະ... ຊ່ຳອ້າຍສາຍລົມ ໄດ້ອູ້ມໄດ້ເຈົ້ງ ດອກໄມ້ມາແຕ່ນ້ອຍ... ດອກໄມ້ຕ້ອງມີຫນີ້ບຸນຄຸນອ້າຍສາຍລົມແທນ.

ສາຍລົມຫົວ ວອອກມາສຽງທຸ່ມກັງວານ.

-ພັທ ວ່າແນວນັ້ນ...

-ອືມ... ອ້າຍພັທ ວ່າດອກໄມ້ ຈະຕ້ອງໄປ ບົວຣະບັດໃຫ້ຊ່ຳ ໆ ທີ່ອ້າຍສາຍລົມ ທຳກັບດອກໄມ້ແຕ່ກີ້...

ດອກໄມ້ບອກຄ ວາມຈິງ ສາຍລົມພົບວ່າ ດອກໄມ້ຍັງມີນິໄສ ເຫມືອນຕອນ ຍັງເດັກ ສໍ່ຕິດໃຫ້ເຫັນຢູ່, ຄຳເວົ້າຫນ້າຮັກ, ມັກເວົ້າຈິງສເມີ.

-ດອກໄມ້ຮັກອ້າຍບໍ່ລະ... ເຮົາແຕ່ງງານກັນນໍ ດອກໄມ້, ອ້າຍຮັກດອກໄມ້ ຕັ້ງແຕ່ນ້ອຍຈົນໃຫ່ຍ ບໍ່ປ່ຽນແປງ, ເຂົ້າໃຈບໍ່ ?... ຮັກດອກໄມ້ເມື່ອຍາມນ້ອຍ ຮັກຢາກໄດ້ມາເປັນນ້ອງ ແຕ່ຕອນນີ້ ອ້າຍຮັກດອກໄມ້ ຢາກໄດ້ມາເປັນເມັຽ.

ສຳຣັບສາຍລົມແລ້ວ ເຂົາບໍ່ເຄີຍອາຍ ທີ່ຈະບອກຄວາມຈິງ, ເຂົາມອງດອກໄມ້, ຜົມຂອງດອກໄມ້ຍາວດົກ ດຳລອຍຟູ ຢູ່ເທິງຫນ້ານ້ຳ... ສາຍລົມຊາວຜົມອ່ອນ ໆ ນັ້ນຂຶ້ນເຕັມກຳມື... ເຂົາເຄີຍໄດ້ເປັຽຜົມໃຫ້ດອກໄມ້ ອີກຕື່ມເມື່ອຍາມນອ້ຍ... ດອກໄມ້ໄ ວ້ຜົມຍາວ ໆ ມາແຕ່ໃດ ໆ... ເຂົາຍິ້ມເສົ້າ ໆ, ຜົມອັນຍາວ ໆ ນີ້ ກໍເຄີຍເປັນຂີ້ມື ຫລື ເຖື່ອມມືຂອງພັທ ທີ່ດຶງຜົມນ້ອງຢູ່ເລື້ອຍ ໆ ເຊັ່ນກັນ.

-ຕົກລົງ... ດອກໄມ້ຕົກລົງບໍ່ ?

ສາຍລົມຍັງຖາມ, ດອກໄມ້ຍິ້ມແລ້ວ ກໍຕອດຫົວຕອບຕົກລົງຢ່າງ ວ່າງ່າຍ. ຄວາມຮັກນີ້ ມັນເຂົ້າໃຈ ກັນມາແຕ່ນອ້ຍ ໆ ແລ້ວ... ເຫດໃດຈຶ່ງຈະບ່າຍບ່ຽງໄດ້... ອີກພັທເວົ້າຊູ່ນັ້ນ ກໍເປັນສ່ວນນຶ່ງ ທີ່ທຳໃຫ້ທັງສອງ ຕ້ອງໄດ້ຄິດເພື່ອ ຫັນຫນ້າມາ ມີຊີວິດ ຄູ່ແບບຜົວເມັຽ.

ສອງມືທີ່ສາຍລົມ ໂອບປະຄອງແກ້ມຂອງດອກໄມ້ ທັງລູບໄລ້ເບົາ ໆ ເຂົາໃຊ້ປາຍດັງ ຫອມລົງ

ທີ່ຫນ້າຜາກ ອັນກົມກ້ຽງຂອງຍິງຄົນຮັກ, ແລ້ວກໍສູດດົມອາຍກິ່ນ ສາວເຫມືອນເຂົາຈະເກັບອາຍກິ່ນຫອມນັ້ນໄວ້ ໃຫ້ເນີນນານ. ນັ້ນເປັນພາບສຸດທ້າຍ, ທີ່ສາຍລົມໄດ້ຝາກ ຮອຍຮັກໃຫ້ກັບດອກໄມ້ ກ່ອນຈະຂຶ້ນໄປ ຮຽນວິຊາອາຊີບ ຕໍາຣວດທີ່ວຽງຈັນ… ແລະ ຕລອດທຸກປີເຂົາກໍຈະກັບຄືນມາຫາດອກໄມ້… ຍິ່ງຫ່າງໄກກໍຍິ່ງຄິດຮອດ, ຄວາມຮັກຍິ່ງ ເພີ້ມທະວີ ແລະງອກງາມ…

ແລ້ວປີນີ້ ກໍເປັນປີສຸດທ້າຍທີ່ສາຍລົມຮຽນຈົບ ແລະ ເປັນປີທີ່ດອກໄມ້ມີຊາຍ ມາຫລົງຮັກຫລົງມັກ ຫລວງຫລາຍ, ຄວາມງາມຂອງດອກໄມ້ ເປັນທີ່ຫມາຍປອງຂອງຊາຍຫລາຍຫນ້າ… ບໍ່ຜິດຫຍັງກັບກິ່ນຫອມ ຂອງດອກໄມ້ ທີ່ສົ່ງກິ່ນຫອມ ກະຈາຍໄປທົ່ວ, ຍົວະຍວນມວນຫມູ່ແມງກະບີ້ ທີ່ພີປີກຢາກແອ່ບິນຕອມ, ຢາກດົມກິ່ນຫອມ ຫວັງຊີມ ຣົສຫວານຂອງເກສອນດອກໄມ້… ດ້ວຍເຫດນີ້ເອງ ຈຶ່ງເປັນເຫດໃຫ້ພັທນາກັບກາຍເປັນດັ່ງ ຕົວປູທີ່ເດີນຂູກ້າມ ຕົວເອງ ເວລາໄຕ່ເດີນ.

> -ກູຄັນໃຈກັບບັກພັທ !… ຫຶງຫວງບໍ່ວ່າ… ມັນດ່າພວກເຮົາບໍ່ໄວ້ຫນ້າ… ນີ້ໆຄໍາກໍຂູກ້າມ… ສອງຄໍາກໍຂູກ້າມ !
>
> -ມັນກໍຂູກ້າມມັນໄປຈັ່ງຊັ້ນ… ຄິດວ່າມີນ້ອງງາມ… ວ່າພວກເຮົາບໍ່ກ້າຕອບຫຍັງ… ມັນກໍເຫມືອນດັ່ງຕົວປູທຸກຄັ້ງຈະໄຕ່ເດີນຂູກ້າມອວດ ວ່າກ້າມຕົວເອງໃຫຍ່… ມັນຊິເຮັດຫຍັງ ໃຫ້ພວກເຮົາໄດ້ ຕັ້ງຫລາຍຄົນ… ກູຈະສອນໃຫ້ມັນ ໄດ້ຮັບບົດຮຽນອັນຍິ່ງໃຫຍ່… ບັກອັນນີ້ !

ຄວາມຄຽດແຄ້ນຂອງຫນຸ່ມຫລາຍຄົນ, ພັທນາບໍ່ອາດຈະຮູ້ເມື່ອຄິງໄດ້ວ່າ ອັນຕະລາຍຫຍັງຈະເກີດຂຶ້ນກັບດອກໄມ້ ນ້ອງສາວຂອງເຂົາ ທີ່ເຂົາທັງຮັກ ທັງຫວງ…ແລະ ໃນທີ່ສຸດສາຍລົມກໍຮຽນຈົບ, ຂັ້ນໄດບ້ານຄັ້ງທໍາອິດ ທີ່ສາຍລົມຈະຢຽບ ຂຶ້ນຄືຂັ້ນໄດບ້ານຂອງດອກໄມ້…

-ດອກໄມ້... ດອກໄມ້ອ້າຍກັບມາແລ້ວ...

ເຂົາຮ້ອງດັງ ໆ ແລະ ມີຄວາມສຸກເຕັມລົ້ນໃນຄວາມຫວັງ, ເພາະຄວາມຫວັງ ຄັ້ງນີ້ກໍຄື : " ກັບມາຢູ່ນຳດອກໄມ້, ເຮົາສັນຍາ ວ່າຈະແຕ່ງດອງກັນ ເມື່ອສາຍລົມຮຽນຈົບ... ຈະໄດ້ຢູ່ໃກ້ ໆ ດອກໄມ້ຊົ່ວນິຣັນດອນ... ຈະບໍ່ໄດ້ໄປ ໆ ມາ ໆ ເຊັ່ນ ເຫມືອນຄັ້ງກ່ອນແລ້ວ".

-ພັທ !

ຜູ້ທີ່ອອກມາຮັບ ຄືພັທ, ພັທຮ້ອງໄຫ້ຂຶ້ນເຫມືອນເດັກ, ຖົ້ມຕົວກອດເພື່ອນແຫນ້ນ ໆ, ນ້ຳຕາໄຫລພາກເປັນທາງຍາວ.

-ພັທ ! ເປັນຫຍັງມີຫຍັງເກີດຂຶ້ນ ?

-ດອກໄມ້ຕາຍແລ້ວ... ສາຍລົມ... ຕາຍໄດ້ເກືອບປີ...

ພັທສອື້ນບອກ, ສາຍລົມຖອຍຫລັງ ຊິງຕົວບໍ່ຕິດ, ເຂົາຮູ້ສຶກຫົວເຂົ່າອ່ອນລົງທັນທີ, ກ່ອນຈະເຊຕົວ ພິດຫລັກລົ້ມໄປ ພັທຮີບຟ້າວເຂົ້າ ໄປປະຄອງເພື່ອນ.

-ເປັນຫຍັງ... ດອກໄມ້ເປັນຫຍັງ... ໂທ້... ຕາຍເກືອບປີບໍ່ມີໃຜສິ່ງຂ່າວຫາ...ດອກໄມ້... ດອກໄມ້ເປັນຫຍັງ ?

24/VII
ຫ້າມຈຳໜ່າຍ

ສາຍລົມສິ່ງສຽງຮ້ອງໄຫ້ອອກມາສຸດຈະອົດກັ້ນໄດ້... ສາຍລົມຮູ້ສຶກຫົວໃຈ ເຫມືອນຈະປຸດເຕັ້ນ, ເຂົາຊົບຫນ້າ ລົງບົນຝ່າມື ສອື້ນນິ້ງ ແລະ ນານ.

-ດອກໄມ້... ໂທ້... ດອກໄມ້ " ຊື່ນີ້ ເປັນຊື່ຂອງດອກໄມ້ ທີ່ຈະບໍ່ມີວັນຕາຍ ທີ່ເຂົາຈະຄ່ຳຄວນ ທຸກທໍຣະມານ ແລະ ຮ່ຳຮ້ອງຫາທຸກຍາມ...

ພັທບໍ່ປາກເອີ່ຍເຖິງຊື່ນ້ອງໆ... ເຂົາຮ້ອງໄຫ້ ທຸກຄັ້ງທີ່ໄດ້ຍິນຊື່ວ່າ "ດອກໄມ້"

ພັທຮູ້ດີ ເປັນຄວາມຜິດຂອງພັທ, ພັທຫຶງຫວງນ້ອງເກີນຂອບເຂດ, ດອກໄມ້ກໍໄດ້ຮັບອັນຕະລາຍໄປໃນຕົວ... ດອກໄມ້ ຖືກລັກພາຕົວໄປຕອນນຶ່ງ ຊຶ່ງດອກໄມ້ ລົງໄປຊັກເຄື່ອງຢູ່ນ້ຳຂອງລຳພັງ... ດອກໄມ້ເສັຽສາວໃຫ້ຫນຸ່ມຫລາຍຫນ້າ ດອກໄມ້ ຖືກນຳສູ່ໂຮງພຍາບານ, ແຕ່ກັບມາກິນຢາຕາຍຢູ່ບ້ານ, ດອກໄມ້ຂຽນຈົດຫມາຍນ້ອຍ ໆ ໄວ້ໃຫ້ແກ່ສາຍລົມ :

"ດອກໄມ້ຕັ້ງໃຈວ່າຈະໄດ້ເປັນເມັຽອ້າຍສາຍລົມ, ໃຫ້ບໍຣິສຸດທັງກາຍ ແລະ ໃຈ ແຕ່ຄວາມບໍຣິສຸດກາຍ ຂອງດອກໄມ້ ໄດ້ຖືກຜູ້ອື່ນ ທຳລາຍເສັຽແລ້ວ... ດອກໄມ້ອາຍທີ່ຈະມອບຮ່າງກາຍ ອັນບໍ່ບໍຣິສຸດນີ້ ໃຫ້ແກ່ອ້າຍສາຍລົມ ຜູ້ທີ່ຈະມາເປັນຜົວ ຂອງດອກໄມ້... ດອກໄມ້ຂໍຕາຍດີກວ່າ"

ສາຍລົມຫັນໃຈຍາວ.. ຫລັງມີປ້າຍແລ້ວ ປ້າຍອີກ ທີ່ນ້ຳຕາໄຫລພຸອອກມາ ບໍ່ຢຸດຂາດ, ເຂົາຍ່າງຂຶ້ນຂັ້ນໄດ ທີ່ສູງນັບຫລາຍກ່ວຮອ້ຍຂັ້ນ ຂອງວັດຫ້ວຍຊາຍ, ຈົນເຂົາໄປຢືນພື້ນທີ່ເດີ່ນ ວັດ... ເຂົາມາສົງບຈິດ ແລະ ອະທິຖານ ມອບຕົວ... ໂທ້... ດອກໄມ້ ຊຶ່ງນີ້ເຫມືອນດອກໄມ້ ຍັງມີຊີວິດຢູ່ ແລະ ມັນຍັງນຳ ຄວາມທຸກໂສກເສົ້າ ມາສູ່ສາຍລົມໄປຕລອດ... ການຈາກໄປ ຂອງດອກໄມ້ ສາຍລົມ ກຳລັງເກີດບ້າ, ທຸກທໍຣະມານ, ວ້າເຫວ່ຫົວໃຈ... ສາຍລົມຕັດສິນໃຈ ສິ່ງທີ່ ຈະທຳໃຫ້ພົ້ນທຸກ, ຫມົດທຸກໄດ້ ຈະຕ້ອງເກັບຕົວ ເຂົ້າວັດຟັງທັມ... ສາຍລົມຈະຂໍບວດ, ບວດເປັນພຣະ

ຈະບໍ່ຍອມສິກອອກມາເລີຍ.

ສຽງກະດິງ ທີ່ດັງ ວິເວກ ວັງເວງ ທຸກຄັ້ງ ທີ່ກະແສລົມພັດປິວ, ດັງກ້ອງທົ່ວ ບໍຣິເວນວັດ... ສຽງພຣະ ກຳລັງສວດມົນ ດັງແວ່ວ ອອກມາຈາກຫ້ອງອາຣາມວັດໃຫ່ຍ ໆ ນັ້ນ... ສິ່ງນີ້ ເປັນສິ່ງທີ່ສົງບໃຈຂອງເຂົາ... ແຕ່ສິ່ງນຶ່ງ ທີ່ສາຍລົມ ຍັງຄ້ຳຄວນ ຄິດຫາຢູ່, ຍັງກຶກກ້ອງພາຍໃນດວງໃຈ.

-ໂອ້ນໍ້... ດອກໄມ້ເອີຍ... ຊື່ນີ້ເປັນຊື່ຂອງເຈົ້າ ທີ່ຍັງບໍ່ຕາຍ... ແຕ່ເຖິງແມ້ຕົນຕົວ ຮູບຮ່າງ ເນື້ອຫນັງ ມັງສາ ຂອງເຈົ້າ, ຊຶ່ງເນົ່າເປື່ອຍ ໄປກັບພື້ນດິນນັ້ນ...ແລະ ດວງວິນຍານ ຂອງເຈົ້າ ຈະບິນວົນ ລ່ອງລອຍໄປ ຢູ່ແຫ່ງຫົນໃດ ກໍຂໍໃຫ້ ດອກໄມ້ຈົ່ງ ຮັບຮູ້ເອົາໄ ວ້ວ່າ ສາຍລົມຄົນນີ້ ຈະຮັກດອກໄມ້... ຕລອດໄປ ແລະ ຕລອດຊີວິດ... ໂອ້... ດອກໄມ້ຂອງອ້າຍ... ດອກໄມ້ຂອງອ້າຍ "

ເຂົາຍັງພ່ຳເພີ້ຫາ ຊື່ຄົນຮັກ, ນ້ຳຕາທີ່ໄຫລພຸລົງເປັນສາຍ, ຈົນເຂົາຮູ້ສຶກວ່າ... ເຂົາອາດຈະຕາບອດໄປ ໃນຊົ່ວ ຣະຍະ ພິບຕາດຽ ວ./.

___ຈົບບໍຣິບູນ.___________

ໂຮມເຣື່ອງສັ້ນ

page principale